NSW GOVERNMENT

# What do I need to know if my child is suspended?

## Parent/carer information

# ຂ້ອຍຈະຕ້ອງຮູ້ຫຍັງແດ່ຖ້າລູກຂອງຂ້ອຍຖືກສັ່ງພັກຮຽນ?

## ຂໍ້ມູນສຳລັບພໍ່ແມ່/ຜູ້ດູແລ

### ການສັ່ງພັກຮຽນແມ່ນຫຍັງ?

ການສັ່ງພັກຮຽນແມ່ນເວລາທີ່ໂຮງຮຽນຂໍໃຫ້ນັກຮຽນບໍ່ມາເຂົ້າໂຮງຮຽນເປັນໄລຍະເວລານຶ່ງ. ນັກຮຽນໃນຊັ້ນອະນຸບານເຖິງປີ 2 ອາດຈະຖືກສັ່ງພັກຮຽນເປັນເວລາເຖິງ 5 ມື້ ເຂົ້າຮຽນ ແລະ ນັກຮຽນປີ 3 – 12 ອາດຈະຖືກສັ່ງພັກຮຽນເປັນເວລາເຖິງ 10ມື້ ເຂົ້າຮຽນ.

ທ່ານຄູໃຫຍ່ອາດຈະສັ່ງພັກນັກຮຽນໃນເວລາທີ່ຄວາມປະພຶດອັນເປັນທີ່ກັງວົນຂອງນັກຮຽນເຮັດໃຫ້ເກີດຄວາມສ່ຽງທີ່ຮັບບໍ່ໄດ້ຕໍ່ຜູ້ອື່ນຫຼືຕໍ່ການສິດສອນແລະການຮຽນຮູ້.

ທ່ານຄູໃຫຍ່ອາດຈະສັ່ງພັກຮຽນເມື່ອພວກເຂົາໄດ້ພະຍາຍາມຈັດການຄວາມປະພຶດອັນເປັນທີ່ກັງວົນຂອງນັກຮຽນດ້ວຍວິທີອື່ນແລ້ວ ແລະ ໂຮງຮຽນຕ້ອງການເວລາເພື່ອວາງແຜນການສະໜັບສະໜູນສຳລັບຄວາມປະພຶດດັ່ງກ່າວແລະວາງແຜນວິທີການຮັກສາທຸກຄົນໃຫ້ປອດໄພໂດຍບໍ່ໃຫ້ນັກຮຽນຢູ່ໃນໂຮງຮຽນ. ທ່ານຄູໃຫຍ່ຕ້ອງຄຳນຶງເຖິງຄວາມປະພຶດ ແລະ ຄວາມຕ້ອງການຂອງນັກຮຽນໃນເວລາທີ່ຕັດສິນໃຈສັ່ງພັກຮຽນ. ຖ້າຄວາມປະພຶດດັ່ງກ່າວຮ້າຍແຮງ ຫຼື ເປັນບັນຫາດ້ານຄວາມປອດໄພ, ລູກຂອງທ່ານອາດຈະຖືກສັ່ງພັກຮຽນໃນທັນທີ.

### ຈະເກີດຫຍັງຂຶ້ນຖ້າລູກຂອງຂ້ອຍຖືກພັກຮຽນ?

ທ່ານຄູໃຫຍ່ຕ້ອງບອກນັກຮຽນດ້ວຍວາຈາຕາມຄວາມເໝາະສົມ. ພວກເຂົາຕ້ອງແຈ້ງໃຫ້ພໍ່ແມ່ ຫຼື ຜູ້ດູແລໃຫ້ຊາບດ້ວຍວາຈາ ໃນທັນທີຖ້າເປັນໄປໄດ້ ຫຼື ພາຍໃນ 24 ຊົ່ວໂມງ. ທ່ານແລະລູກຂອງທ່ານຈະຕ້ອງໄດ້ຮັບໂອກາດພົບປະກັບໂຮງຮຽນເພື່ອຕອບໂຕ້ຕໍ່ການຖືກພັກຮຽນນີ້. ໂຮງຮຽນຈະເຮັດວຽກຮ່ວມກັບທ່ານກ່ຽວກັບຍຸດທະສາດ ແລະການສະໜັບສະໜູນທີ່ສາມາດນຳໄປໃຊ້ເພື່ອຊ່ວຍລູກຂອງທ່ານໄດ້.

ທ່ານຄູໃຫຍ່ຍັງຈະແຈ້ງໃຫ້ທ່ານຊາບເປັນລາຍລັກອັກສອນກ່ຽວກັບການສັ່ງພັກຮຽນ, ເຊິ່ງລວມເຖິງເຫດຜົນທີ່ລູກຂອງທ່ານຖືກພັກຮຽນ ລາຍລະອຽດແລະໄລຍະເວລາຂອງການພັກຮຽນ.

ໃນລະຫວ່າງການພັກຮຽນລູກຂອງທ່ານຈະບໍ່ໄດ້ຮັບອະນຸຍາດໃຫ້ເຂົ້າໂຮງຮຽນ. ໂຮງຮຽນຈະໃຫ້ການຊ່ວຍເຫຼືອລູກຂອງທ່ານເພື່ອສືບຕໍ່ການຮຽນໃນລະຫວ່າງທີ່ພັກຮຽນ ແລະ ຈະກວດສອບກັບທ່ານ ແລະ ລູກຂອງທ່ານ. [ມີຂໍ້ມູນກ່ຽວກັບວິທີການສະໜັບສະໜູນຄວາມເປັນຢູ່ທີ່ດີຂອງລູກທ່ານໃນລະຫວ່າງການຖືກພັກຮຽນ.]

### ການຂະຫຍາຍເວລາ ຂອງການສັ່ງພັກຮຽນ

ຖ້າການສັ່ງພັກຮຽນບໍ່ໃຫ້ເວລາພຽງພໍສຳລັບການວາງແຜນການສະໜັບສະໜູນ ຫຼື ມີຄວາມສ່ຽງດ້ານຄວາມປອດໄພຢ່າງຕໍ່ເນື່ອງທີ່ຍັງບໍ່ທັນຈັດການໄດ້, ທ່ານຄູໃຫຍ່ສາມາດຂະຫຍາຍລະຍະເວລາການພັກຮຽນໄດ້. ພໍ່ແມ່/ຜູ້ດູແລຈະຖືກແຈ້ງໃຫ້ຊາບກ່ອນສິ້ນສຸດການພັກຮຽນຖ້າມີການຂະຫຍາຍເວລາອອກໄປ.

### ຂ້ອຍສາມາດຍື່ນອຸທອນການສັ່ງພັກຮຽນໄດ້ບໍ?

ໄດ້, ຖ້າທ່ານເຊື່ອວ່າທ່ານຄູໃຫຍ່ໄດ້ທຳການຕັດສິນໃຈທີ່ບໍ່ຍຸຕິທຳ ຫຼື ບໍ່ປະຕິບັດຕາມນະໂຍບາຍແລະຂັ້ນຕອນຢ່າງຖືກຕ້ອງ. [ເບິ່ງແຫຼ່ງຂໍ້ມູນການອຸທອນ].

ມີຂໍ້ມູນເພີ່ມເຕີມກ່ຽວກັບການ[ສົ່ງເສີມລູກຂອງທ່ານ] ລວມເຖິງ[ກົດບັດຊຸມຊົນໂຮງຮຽນ]ທີ່ອະທິບາຍວິທີການຕິດຕໍ່ກັບໂຮງຮຽນ.

### ກອງປະຊຸມແກ້ໄຂການສັ່ງພັກຮຽນແມ່ນຫຍັງ?

ລູກຂອງທ່ານຈະກັບມາໂຮງຮຽນໃນ ຫຼື ກ່ອນວັນທີການພັກຮຽນສິ້ນສຸດລົງ. ການມີສ່ວນພົວພັນທາງບວກຂອງທ່ານກັບໂຮງຮຽນແມ່ນມີຄວາມສຳຄັນຫຼາຍໃນການຈັດການກັບຄວາມປະພຶດຂອງລູກທ່ານ ແລະ ພັດທະນາແນວທາງແກ້ໄຂບັນຫາຮ່ວມກັນ. ກ່ອນທີ່ລູກຂອງທ່ານຈະກັບຄືນໂຮງຮຽນຈະຕິດຕໍ່ຫາທ່ານໂດຍທາງໂທລະ ສັບເພື່ອຈັດກອງປະຊຸມແກ້ໄຂກັບເຈົ້າໜ້າທີ່ຂອງໂຮງຮຽນທີ່ເຮັດວຽກຢ່າງໃກ້ຊິດກັບລູກຂອງທ່ານ.

ກອງປະຊຸມສາມາດເຮັດແບບໜ້າຕໍ່ໜ້າ, ຕາມທາງໂທລະສັບ ຫຼື ອອນລາຍໃນຮູບແບບທີ່ຈະໃຫ້ໂອກາດທີ່ດີທີ່ສຸດຂອງການສົນທະນາໃນທາງບວກ. ກອງປະຊຸມຈະເປັນວິທີທີ່ທ່ານສາມາດເຮັດວຽກຮ່ວມກັນເພື່ອສະໜັບສະໜູນລູກຂອງທ່ານເມື່ອພວກເຂົາກັບຄືນໄປໂຮງຮຽນ. ທ່ານສາມາດເອົາ[ຄົນສະໜັບສະໜູນ]ມາຮ່ວມປະຊຸມນຳໄດ້. ຜູ້ສະໜັບສະໜູນອາດຈະເປັນຄົນທີ່ສາມາດສະໜັບສະໜູນທ່ານແລະ / ຫຼືລູກຂອງທ່ານດ້ວຍການຊ່ວຍເຫຼືອດ້ານການປະຕິບັດແລະ / ຫຼືຄວາມຮູ້ສຶກ.

ສຳລັບຄວາມປະພຶດທີ່ເປັນໜ້າກັງວົນທີ່ຕ້ອງການຍຸດທະສາດແລະການສະໜັບສະໜູນເພີ່ມເຕີມ ໂຮງຮຽນຈະເຮັດວຽກຮ່ວມກັບທ່ານແລະລູກຂອງທ່ານເພື່ອສ້າງແຜນ ການສະໜັບສະໜູນພວກເຂົາແລະຫຼຸດຜ່ອນຄວາມສ່ຽງ. ລູກຂອງທ່ານອາດຈະມີແຜນ ການຢູ່ແລ້ວ. ຖ້າມີແຜນການຢູ່ແລ້ວ ແຜນການນັ້ນກໍຈະຖືກດັດແປງເພື່ອຊ່ວຍສະໜັບສະໜູນລູກຂອງທ່ານ. ແຜນການນີ້ຈະຖືກແບ່ງປັນກັບທ່ານ ແລະ ກັບເຈົ້າໜ້າທີ່ຄົນອື່ນໆໃນໂຮງຮຽນທີ່ສະໜັບສະໜູນລູກຂອງທ່ານ.

### ຈະເກີດຫຍັງຂຶ້ນຖ້າຄວາມປະພຶດດັ່ງກ່າວເກີດຂຶ້ນອີກ?

ຖ້າຄວາມປະພຶດທີ່ເປັນໜ້າກັງວົນເກີດຂຶ້ນອີກເທື່ອນຶ່ງ, ທ່ານຄູໃຫຍ່ແລະທີມງານສະໜັບສະໜູນການຮຽນຮູ້ຂອງໂຮງຮຽນຈະພະຍາຍາມກຳນົດວິທີການສະໜັບສະໜູນ ການຮຽນຮູ້ຂອງລູກຂອງທ່ານເຊິ່ງອາດຈະປະກອບມີການສັ່ງພັກຮຽນອີກ, ອັນນີ້ອາດຈະລວມທັງການຂໍໃຫ້ຜູ້ຊ່ຽວຊານຈາກພາຍໃນກະຊວງໃຫ້ການຊ່ວຍເຫຼືອ.

### ຂ້ອຍສາມາດໄດ້ຮັບຂໍ້ມູນຫຍັງແດ່ຈາກໂຮງຮຽນ?

ທ່ານສາມາດສອບຖາມເອົາຂໍ້ມູນເພີ້ມເຕີມ ກ່ຽວກັບສິ່ງທີ່ເກີດຂຶ້ນແລະເຫດຜົນຈາກໂຮງຮຽນໄດ້. ໂຮງຮຽນຄວນອະທິບາຍໃຫ້ທ່ານຮູ້ເຫດຜົນຢູ່ເບື້ອງຫຼັງການຕັດສິນໃຈໃດໆ ການດຳເນີນການທີ່ຈະເກີດຂຶ້ນ ແລະຈະເຮັດແນວໃດຫາກທ່ານມີບັນຫາ.

### ບໍລິການນາຍພາສາທາງໂທລະສັບ

ຖ້າທ່ານຕ້ອງການຕິດຕໍ່ກັບໂຮງຮຽນ ແລະຕ້ອງການຄວາມຊ່ວຍເຫຼືອດ້ານພາສາອັງກິດ ກະລຸນາໂທຫາບໍລິການນາຍພາສາທາງໂທລະສັບ ເບີ 131 450, ບອກພວກເຂົາວ່າທ່ານຕ້ອງການພາສາໃດ ແລະຂໍໃຫ້ຜູ້ຮັບສາຍໂທຫາໂຮງຮຽນ. ຜູ້ໂຮງຮຽນ. ຜູ້ຮັບສາຍຈະຊອກຫານາຍພາສາຢູ່ໃນສາຍເພື່ອຊ່ວຍທ່ານໃນການສົນທະນາຂອງທ່ານ. ທ່ານຈະບໍ່ຖືກເກັບຄ່າ ທ່ານ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.